ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ 18 /ຈຂ.ຊຂ

ວັນທີ 25 ຕຸລາ 2017

# ຄຳສັ່ງແນະນຳ

## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບຂອງ

## ທຸກພາກສ່ວນປະກອບສ່ວນເຂົ້າໃນວຽກງານຮາກຖານການເມືອງຢູ່ ບ້ານ ແລະ ກຸ່ມບ້ານ

ເຖິງ: ບັນດາພະແນກການ, ຄະນະປະຈຳພັກເມືອງ 7 ເມືອງ ແລະ ຫ້ອງການອ້ອມຂ້າງເມືອງ.

ຄືດັ່ງພວກເຮົາຮູ້ນຳກັນແລ້ວວ່າວຽກງານກໍ່ສ້າງຮາກຖານການເມືອງເປັນວຽກຍຸດທະສາດສຳຄັນ ແລະ ເປັນມູນເຊື້ອຂອງພັກ, ສາມາດຢັ້ງຢືນໄດ້ວ່າຢູ່ບ່ອນໃດເອົາໃຈໃສ່ຕໍ່ວຽກງານກໍ່ສ້າງຮາກຖານບ່ອນນັ້ນກໍ່ຈະເກີດມີຜົນສຳເລັດຕາມ 4 ເນື້ອໃນ 4 ຄາດໝາຍ ແລະ ກົງກັນຂ້າມບ່ອນໃດບໍ່ເອົາໃຈໃສ່ ຫຼື ເອົາໃຈໃສ່ ແຕ່ເຮັດແບບລວມໆ ບໍ່ມີຈຸດສຸມວຽກງານ ຢູ່ບ່ອນນັ້ນຜົນໄດ້ຮັບບໍ່ສູງ ມັກເກີດມີຂໍ້ຫຍຸ້ງຍາກຕ່າງໆ. ໃນສະພາບຄວາມເປັນຈິງຢູ່ບ້ານ ແລະ ກຸ່ມບ້ານ ມີພະນັກງານຂອງລັດປະຈຳການຫຼວງຫຼາຍພໍສົມຄວນເປັນຕົ້ນແມ່ນ: ຄະນະພັກຮາກຖານກຸ່ມບ້ານ, ຄະນະພັກ, ອຳນາດການປົກຄອງ, ນາຍຄູ, ນາຍໝໍ, ພະນັກງານກະສິກຳ, ພະນັກງານປະຈຳການ ປກຊ, ປກສ ບໍລິຫານປະຊາຊົນ ແລະ ພະນັກງານກໍ່ສ້າງຮາກຖານ ຖ້າເບິ່ງຕາມບັນຊີຕົວເລກແມ່ນມີຄວາມສາມາດພຽງພໍ ແຕ່ຂະແໜງການສ່ວນຫຼາຍມັກເຮັດວຽກວິຊາສະເພາະແຕ່ດ້ານດຽວຈຶ່ງບໍ່ສາມາດນຳໃຊ້ທຸກກຳລັງແຮງທີ່ພວກເຮົາມີ, ເພື່ອເຮັດໃຫ້ທຸກໆພາກສ່ວນໄດ້ປະກອບສ່ວນເຂົ້າໃນວຽກງານຮາກຖານໃຫ້ໄດ້ດີກ່ວາເກົ່າ.

## ເຈົ້າແຂວງ ອອກຄຳສັ່ງແນະນຳດັ່ງນີ້:

1. ໃຫ້ບັນດາເມືອງ, ບັນດາພະແນກການ, ກົມກອງ, ຂະແໜງການຂອງແຂວງ, ເມືອງ ເອົາໃຈໃສ່ຫັນລົງຮາກຖານຕາມຍຸດຖະສາດຂອງພັກ ຕາມສາຍຕັ້ງ, ຕາມການມອບໝາຍ, ສະເພາະພະນັກງານຂອງຕົນທີ່ປະຈຳຢູ່ບ້ານ, ກຸ່ມບ້ານໃຫ້ເຂົ້າຮ່ວມການກໍ່ສ້າງຮາກຖານການເມືອງ ຕາມແຜນການຂອງເມືອງ ແລະ ກຸ່ມບ້ານ ແນໃສ່ປະກອບສ່ວນຊ່ວຍປະຕິບັດຕາມ 4 ເນື້ອໃນ 4 ຄາດໝາຍ ຕາມການມອບໝາຍຂອງກຸ່ມບ້ານ, ເປັນຂົວຕໍ່ໃຫ້ຄຳແນະນຳ ຊ່ວຍເຜີຍແຜ່ຕາມຄຳແນະນຳຂອງພັກ-ລະບຽບກົດໝາຍຂອງລັດຕາມຄວາມອາດສາມາດຕົວຈິງຂອງພະນັກງານ.

2. ໃຫ້ຄະນະພັກຮາກຖານແຕ່ລະກຸ່ມປັບປຸງແບບແຜນວິທີເຮັດວຽກຂອງຕົນ, ນອກຈາກຄະນະພັກຮາກຖານແລ້ວໃຫ້ຄັດເລືອກເອົາພະນັກງານລົງຮາກຖານທີ່ມີວຸດທິການສຶກສາສູງກວ່າ, ປະສົບປະການຫຼາຍກວ່າ, ສຳລັບກຳລັງ ປກຊ-ປກສ ແມ່ນໃຫ້ຄັດເລືອກເອົາຜູ້ທີ່ມີຊັ້ນສູງ ຫຼື ຜູ້ທີ່ມີປະສົບປະການກ່ວາໝູ່ມາເປັນຄະນະທີ່ປຶກສາວຽກຮາກຖານໃນ

ໄລຍະທີ່ຜູ້ກ່ຽວປະຈໍາການ, ຄະນະພັກຮາກຖານຕ້ອງມີແຜນການນໍາໃຊ້ພະນັກງານລັດຢູ່ກັບທີ່ ຈະມອບໝາຍວຽກຫຍັງ, ໃຫ້ເຂົາເຈົ້າຊ່ວຍຫຍັງ ຕາມຄວາມເໝາະສົມ.

3. ໃຫ້ມີການສ່ອງແສງລາຍງານຕາມລະບຽບຂອງວຽກງານກໍ່ສ້າງຮາກຖານຄື:

- ເດືອນນີ້ໃຫ້ສ່ອງແສງລາຍງານຢູ່ຂັ້ນກຸ່ມ ( ເຊີນເອົາບັນດາເລຂາພັກບ້ານ ແລະ ຫົວໜ້າທີມງານ ພະນັກງານຮາກຖານປະຈໍາຢູ່ແຕ່ລະບ້ານ, ຕົວແທນແຕ່ລະຂະແໜງທີປະຈໍາຢູ່ບ້ານ ແລະ ກຸ່ມບ້ານ) ມາຮ່ວມ.

- ເດືອນຕໍ່ໄປໃຫ້ຈັດຢູ່ສໍານັກງານປົກຄອງເມືອງ.

4. ເມື່ອຮັບຄໍາສັ່ງແນະນໍາສະບັບນີ້ແລ້ວຈົ່ງພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ເຈົ້າແຂວງ

ບົວສອນ ສີບວນທອງ